ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

5 1 9 - - - - -

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 519 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 06 FEB 2023

## ໜັງສືແຈ້ງເຊີນປະມູນ

1. ກະຊວງສຶກສາທິການ ແລະ ກິລາ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນການຈັດຊື້ເຄື່ອງສາທິດວິທະຍາສາດ (ເຄື່ອງຫ້ອງທົດລອງ) ສະໜອງແຈກຢາຍໃຫ້ແກ່ໂຮງຮຽນມັດທະຍົມສົມບູນ ເປົ້າໝາຍ 5 ແຫ່ງ ປຸ 5 ແຂວງ ໂດຍນໍາໃຊ້ງົບປະມານແຫ່ງລັດ ປະຈໍາປີ 2023. ສໍາເລັດພາຍໃນ 04 ເດືອນ ຫຼັງຈາກເຊັນສັນຍາ (ຊຶ່ງລາຍລະອຽດຕ່າງໆ ລວມທັງເງື່ອນໄຂການປະມູນໄດ້ຄັດຕິດໃນເອກະສານການປະມູນ);
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ;
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ສໍານັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ, ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສໍານັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ ຖະໜົນລ້ານຊ້າງ (ເຂດສີສະເກດ) ໂທລະສັບ: 021 255253, 020 22565174 ຕາມວັນເວລາລັດຖະການ;
5. ເອກະສານປະມູນຄົບຊຸດສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການຍື່ນໜັງສືສະເໜີຫາ ສໍານັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ, ເລີ່ມແຕ່ວັນທີ .10...2...2023 ເປັນຕົ້ນໄປ, ໃນລາຄາຊຸດລະ 1.500.000 ກີບ (ໜຶ່ງລ້ານຫ້າແສນກີບ) ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ວິທີການຊໍາລະຕ້ອງຈ່າຍເປັນ ເງິນສົດ ຫລື ເຊັກເງິນສົດ;
6. ຊອງປະມູນຕ້ອງສົ່ງ ທີ່ຫ້ອງປະຊຸມກະຊວງສຶກສາທິການ ແລະ ກິລາ (ເຂດສີສະເກດ) ເວລາ 9:00 ໂມງ ຫຼື ກ່ອນເວລາ 9:00 ໂມງ ຂອງວັນທີ ..16..3..2023.... ທີ່ກໍານົດເປັນເວລາຊ້າ ສຸດໃນການຍື່ນຊອງປະມູນ. ຊອງປະມູນທີ່ສົ່ງມາທາງເອເລັກໂຕນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ;
7. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 9:00 ໂມງ ຂອງວັນທີ .16...3...2023... ຢູ່ທີ່ ຫ້ອງປະຊຸມກະຊວງສຶກສາທິການ ແລະ ກິລາ (ເຂດສີສະເກດ) ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ;
8. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫຼຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນມາພ້ອມ;
9. ທີ່ຢູ່ຕາມທີ່ຢູ່ຂ້າງເທິງແມ່ນ: ເຖິງ: ສໍານັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ
ທີ່ຕັ້ງຂອງຫ້ອງການ : ສໍານັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ, ຖະໜົນລ້ານຊ້າງ ຕູ້ໄປສະນີ 067 (ເຂດສີສະເກດ)ບ້ານຊຽງຍືນ, ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ, ໂທລະສັບ: 021 255253; 020 22565174

**ຫົວໜ້າຫ້ອງການ**

ກະຊວງສຶກສາທິການ ແລະ ກິລາ ຫ້ອງການ

ນ.ດາລາວອນ ກິດຕິພັນ

CS Scanned with CamScanner